**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ
ຫ້ອງການກະຊວງ

ເລກທີ 2720 /ຫກງ
ນະຄອນຫລວງວຽງຈັນ, ວັນທີ 12 ພ.ຈິກ 2019

# ແຈ້ງການ

ຮຽນ : - ທ່ານຫົວໜ້າ ຫ້ອງການກະຊວງອຸດສາຫະກຳ ແລະການຄ້າ
- ທ່ານຫົວໜ້າ ຫ້ອງການກະຊວງແຜນການ ແລະການລົງທຶນ
- ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຂຶ້ນທະບຽນວິສາຫະກິດ, ຮັບອະນຸຍາດລົງທຶນ ຈາກຂະແໜງການທີ່ກ່ຽວຂ້ອງ

ເລື່ອງ : ການເຂົ້າໃນລະບົບອາກອນມູນຄ່າເພີ່ມ

- ອີງຕາມກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ48/ສພຊ, ລົງວັນທີ 20 ມິຖຸນາ 2018;
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ 2929/ກງ, ລົງວັນທີ 31 ສິງຫາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ.

ເພື່ອເຮັດໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຂຶ້ນທະບຽນວິສາຫະກິດ, ຮັບອະນຸຍາດລົງທຶນ ຈາກຂະແໜງການທີ່ກ່ຽວຂ້ອງ ທັງວິສາຫະກິດຂຶ້ນທະບຽນໃໝ່ ແລະວິສາຫະກິດທີ່ໄດ້ເຄື່ອນໄຫວທຸລະກິດຜ່ານມາແລ້ວ ທີ່ມີເລກປະຈຳຕົວຜູ້ເສຍອາກອນ ໄດ້ຖືກຈັດເຂົ້າໃນລະບົບອາກອນມູນຄ່າເພີ່ມຢ່າງຖືກຕ້ອງ.

ຫ້ອງການກະຊວງການເງິນ ຂໍແຈ້ງມາຍັງບັນດາທ່ານຊາບ ດັ່ງນີ້ :

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຂຶ້ນທະບຽນວິສາຫະກິດ, ຮັບອະນຸຍາດລົງທຶນ ຈາກຂະແໜງການທີ່ກ່ຽວຂ້ອງ ທີ່ໄດ້ຮັບເລກປະຈຳຕົວຜູ້ເສຍອາກອນ ລວມທັງວິສາຫະກິດທີ່ຂຶ້ນທະບຽນໃໝ່ ແລະວິສາຫະກິດທີ່ໄດ້ເຄື່ອນໄຫວທຸລະກິດຜ່ານມາແລ້ວ ທີ່ບໍ່ແມ່ນຈຸລະວິສາຫະກິດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງດຳລັດວ່າດ້ວຍການຈັດແບ່ງຂະໜາດວິສາຫະກິດຂະໜາດນ້ອຍ ແລະກາງ ສະບັບເລກທີ 25/ລບ, ລົງວັນທີ 16 ມັງກອນ 2017 ແມ່ນຖືເປັນຜູ້ເຂົ້າໃນລະບົບອາກອນມູນຄ່າເພີ່ມໂດຍອັດຕາໂນມັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ບໍ່ຈຳເປັນຕ້ອງສະເໜີເຂົ້າໃນລະບົບອາກອນມູນຄ່າເພີ່ມຕື່ມອີກ ຊຶ່ງຈະຖືກບັນທຶກຢູ່ໃນຖານຂໍ້ມູນການເກັບລາຍຮັບວ່າເປັນຜູ້ທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ;
2. ກໍລະນີ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຂຶ້ນທະບຽນວິສາຫະກິດ, ຮັບອະນຸຍາດລົງທຶນ ຈາກຂະແໜງ ການທີ່ກ່ຽວຂ້ອງ ລວມທັງວິສາຫະກິດທີ່ຂຶ້ນທະບຽນໃໝ່ ແລະວິສາຫະກິດທີ່ໄດ້ເຄື່ອນໄຫວທຸລະກິດຜ່ານມາແລ້ວ ທີ່ບໍ່ແມ່ນຈຸລະວິສາຫະກິດ ຕ້ອງແຈ້ງ ແລະມອບອາກອນມູນຄ່າເພີ່ມ ເປັນແຕ່ລະເດືອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຖ້າຫາກບໍ່ແຈ້ງມອບອາກອນມູນຄ່າເພີ່ມ ແມ່ນຈະຖືກປັບໃໝ 1.500.000 ກີບຕໍ່ເດືອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 60 ຂໍ້ 7 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

**ຫົວໜ້າຫ້ອງການກະຊວງ**

ສົມບູນ ອິນທະປັດຖາ

ເບີໂທ 021 217025